ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຮອງຜູ້ວ່າການ ທຫລ ຕ້ອນຮັບ ຄະນະນຳ ສູນຂໍ້ມູນຂ່າວສານສິນເຊື່ອແຫ່ງຊາດ ຫວຽດນາມ




ໃນວັນທີ 15 ສິງຫາ 2019, ທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຕ້ອນຮັບທ່ານ ໂດ໋ ຫວງ ຟ່ອງ ຜູ້ອຳນວຍການໃຫຍ່ ສູນຂໍ້ມູນຂ່າວສານສິນເຊື່ອແຫ່ງຊາດ ສ.ສ ຫວຽດນາມ ພ້ອມດ້ວຍຄະນະ ທີ່ມາເຮັດວຽກຢູ່ທະນາຄານແຫ່ງ ສປປ ລາວ ໃນລະຫວ່າງວັນທີ 14-17 ສິງຫາ 2019.

ການເຂົ້າພົບຂອງຄະນະດັ່ງກ່າວໃນຄັ້ງນີ້ ກໍ່ເພື່ອລາຍງານການທົບທວນ, ປະເມີນບົດຄວາມຕ້ອງການທາງດ້ານທຸລະກິດຂອງລະບົບຂໍ້ມູນຂ່າວສານສິນເຊື່ອ, ບົດປະເມີນທາງດ້ານເຕັກນິກໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ ແລະ ສອດຄ່ອງກັບລະບົບຂໍ້ມູນຂ່າວສານສິນເຊື່ອທີ່ເປັນມາດຕະຖານສາກົນ ເຊິ່ງໃນວັນທີ 14 ຫາ ວັນທີ 16 ສິງຫາ 2019 ໄດ້ຈັດກອງປະຊຸມດັ່ງກ່າວ ຢູ່ ທຫລ.

ໃນໂອກາດດັ່ງກ່າວ ທ່ານຮອງຜູ້ວ່າການ ທຫລ ໄດ້ຕີລາຄາສູງຕໍ່ການຈັດຕັ້ງປະຕິບັດວຽກງານຂອງສູນຂໍ້ມູນຂ່າວສານສິນເຊື່ອແຫ່ງຊາດ ສ.ສ ຫວຽດນາມ ແລະ ການມາເຄື່ອນໄຫວວຽກງານຢູ່ ສປປ ລາວ ແລະ ທ່ານຮອງຜູ້ວ່າການ ຍັງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຄະນະດັ່ງກ່າວ ທີ່ໄດ້ໃຫ້ການຮ່ວມມື ແລະ ຊ່ວຍເຫຼືອ ສປປ ລາວ ໃນການພັດທະນາລະບົບການເກັບກຳຂໍ້ມູນຂ່າວສານສິນເຊື່ອ ແລະ ຊ່ວຍໃນການກະກຽມ ສ້າງໃຫ້ຂໍ້ມູນຂ່າວສານສິນເຊື່ອຂອງ ສປປ ລາວ ກາຍເປັນຂະແໜງການທີ່ມີຄວາມໜ້າເຊື່ອຖື ແລະ ສາມາດຮອງຮັບການຂະຫຍາຍຕົວໃນອານາຄົດ ແລະ ໃນອານາຄົດ ທຫລ ກໍ່ມີແຜນຈະເພີ່ມຄວາມເຂັ້ມແຂງໃຫ້ແກ່ ສູນຂໍ້ມູນຂ່າວສານສິນເຊື່ອຂອງ ສປປ ລາວ ໃຫ້ກາຍເປັນຫົວໜ່ວຍເອກະລາດໃນການຈັ້ດຕັ້ງປະຕິບັດວຽກງານ ແລະ ເປັນອົງການນິຕິບຸກຄົນທີ່ສາມາດເຄື່ອນໄຫວດຳເນີນທຸລະກິດຕາມພາລະບົດບາດຂອງຕົນ ເໝືອນກັບສູນຂໍ້ມູນຂ່າວສານສິນເຊື່ອແຫ່ງຊາດ ສ.ສ ຫວຽດນາມ.

**# ພາບ-ຂ່າວ : ສົມອົກ ເຄນຄຳແພງ**

## ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ